ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 25 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 26 ກໍລະກົດ 2018

ສຳນັກງານ ຄຄຊ
0980
27 JUL 2018
ໂທລະສັບ 021 217770

# ບົດບັນທຶກກອງປະຊຸມ

# ສ່ອງແສງວຽກງານສາຍລັດ ປະຈຳເດືອນ ມິຖຸນາ ປີ 2018

ໃນຕອນເຊົ້າຂອງວັນທີ 11 ກໍລະກົດ 2018 ເວລາ 08:30 ໂມງ ຢູ່ທີ່ຫ້ອງປະຊຸມໃຫຍ່ຊັ້ນ IV ທະນາຄານແຫ່ງ ສປປ ລາວ ໄດ້ຈັດກອງປະຊຸມສ່ອງແສງສາຍລັດ ປະຈຳເດືອນ ມິຖຸນາ 2018 ພາຍໃຕ້ການເປັນປະທານຂອງ ທ່ານ ສີມພາວ ໄຟສິດ ຜູ້ວ່າການ ທຫລ ໂດຍມີບັນດາຄະນະກົມ ແລະ ຄະນະອຳນວຍການທະນາຄານທຸລະກິດລັດເຂົ້າຮ່ວມ (ດັ່ງລາຍຊື່ຄັດຕິດມາພ້ອມນີ້). ກອງປະຊຸມໄດ້ຮັບຟັງການລາຍງານຜົນການຈັດຕັ້ງປະຕິບັດວຽກງານຂອງບັນດາກົມ-ທຽບເທົ່າກົມພາຍໃນ ທຫລ ແລະ ທະນາຄານທຸລະກິດລັດ ໃນໄລຍະ 1 ເດືອນຜ່ານມາ ພ້ອມທັງຂໍ້ສະເໜີຕ່າງໆ ຊຶ່ງກອງປະຊຸມໄດ້ປຶກສາຫາລື ແລະ ເອກະພາບກຳນົດວຽກງານຈຸດສຸມໃນຕໍ່ໜ້າ ຄື:

1. ການຮັກສາສະຖຽນລະພາບທາງດ້ານມະຫາພາກ ແມ່ນຍັງພົບກັບຄວາມຫຍຸ້ງຍາກ ເປັນຕົ້ນ: ການຂາດດຸນງົບປະມານ, ໜີ້ສິນພາກລັດ ເພີ່ມຂຶ້ນ, ການຫຼຸດລົງຂອງຄັງສຳຮອງເງິນຕາຕ່າງປະເທດ, ໜີ້ບໍ່ເກີດດອກອອກຜົນ (NPLs) ສູງຂຶ້ນ ແລະ ຄວາມແຕກໂຕນຂອງອັດຕາແລກປ່ຽນ. ສະນັ້ນ, ກອງປະຊຸມຈຶ່ງຮຽກຮ້ອງໃຫ້ທຸກໆກົມ ແລະ ທະນາຄານທຸລະກິດລັດ ຕ້ອງຊ່ວຍກັນແກ້ໄຂຕາມຂອບເຂດ ແລະ ພາລະບົດບາດຂອງຕົນ. ສຳລັບທະນາຄານທຸລະກິດລັດ ແມ່ນສູ້ຊົນໃຫ້ເຄື່ອນໄຫວມີປະສິດທິຜົນ ແລະ ປະສິດທິພາບ ພ້ອມທັງເກັບກູ້ໜີ້ NPLs ໃຫ້ໄດ້. ພ້ອມດຽວກັນນັ້ນ, ກໍ່ໃຫ້ເປັນເຈົ້າການຄົ້ນຄວ້າ, ວິເຄາະລະອຽດ ກ່ຽວກັບການສະໜອງເງິນຕາຕ່າງປະເທດ ໃຫ້ແກ່ບັນດາບໍລິສັດ ແລ້ວລາຍງານມາຍັງ ທຫລ ຊາບຢ່າງເປັນປົກກະຕິ;

2. ດ້ານວິຊາສະເພາະ:

- ມອບໃຫ້ທະນາຄານພັດທະນາລາວ ແລະ ທະນາຄານສົ່ງເສີມກະສິກຳ ຊຸກຍູ້ສະພາບໍລິຫານຂອງຕົນ ຕໍ່ກັບການຄົ້ນຄວ້າປັບປຸງຖານະການເງິນຂອງຄະນະສະເພາະກິດ ເພື່ອພິຈາລະນາຮັບຮອງເອົາການຄົ້ນຄວ້າດັ່ງກ່າວໂດຍໄວ ເພື່ອຈະໄດ້ນຳສະເໜີລັດຖະບານ ພິຈາລະນາຮັບຮອງ;
- ສຳລັບທະນາຄານທຸລະກິດລັດ ແມ່ນໃຫ້ຄົ້ນຄວ້າທ່າແຮງຂອງຕົນທີ່ມີຢູ່ຢ່າງແທ້ຈິງ ເພື່ອປະກອບສ່ວນຊື້ພັນທະບັດກະຊວງການເງິນ, ສ່ວນທະນາຄານທຸລະກິດອື່ນ ແມ່ນໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມບໍລິການທະນາຄານ ເຊີນມາປະຊຸມປຶກສາຫາລືຄວາມເປັນໄປໄດ້ໃນການປະກອບສ່ວນຊື້ພັນທະບັດ ໂດຍສະເພາະແມ່ນອັດຕາເບ້ຍທີ່ທາງທະນາຄານທຸລະກິດ ຕ້ອງການ;
- ວຽກງານຊຳລະສະສາງ ໃນໄລຍະທີ່ຍັງບໍ່ທັນມີນິຕິກຳຄຸ້ມຄອງຈະແຈ້ງ, ການສະເໜີຂໍອະນຸຍາດໃຫ້ການບໍລິການຊຳລະຜ່ານເຄື່ອງມືເອເລັກໂຕຼນິກ ແມ່ນຮັບພິຈາລະນາສະເພາະທະນາຄານທຸລະກິດເທົ່ານັ້ນ, ສ່ວນສະຖາບັນການເງິນຈຸລະພາກ ຫຼື ບັນດາບໍລິສັດ ແມ່ນບໍ່ຮັບພິຈາລະນາ; ຖ້າມີການສະເໜີມາ ແມ່ນມອບໃຫ້ຫ້ອງການ ທຫລ ແຈ້ງຕອບ;

3. ຄະນະສະເພາະກິດ:

– ມອບໃຫ້ຄະນະສະເພາະກິດ ທີ່ຮັບຜິດຊອບວຽກຊໍາລະສະສາງກັບຕ່າງປະເທດ ເອົາໃຈໃສ່ຈັດຕັ້ງປະຕິ ບັດຕາມທິດຊີ້ນໍາຂອງຂັ້ນເທິງມອບໝາຍໃຫ້ມີຄວາມສໍາເລັດ;

– ມອບໃຫ້ຄະນະຮັບຜິດຊອບເຈລະຈາກູ້ຢືມເງິນຈາກ CDB ເປັນເຈົ້າການຄົ້ນຄວ້າລົງເລິກເງື່ອນໄຂທີ່ CDB ສະເໜີມາ, ອັນໃດແມ່ນຄວາມຮັບຜິດຊອບຂອງ ທຫລ, ອັນໃດແມ່ນຄວາມຮັບຜິດຊອບຂອງພາກສ່ວນກ່ຽວຂ້ອງ ໂດຍສະເພາະ ກະຊວງອຸດສາຫະກໍາ ແລະ ການຄ້າ, ກົມໄກຈັດຕັ້ງປະຕິບັດຈະເຮັດແນວໃດ;

– ມອບໃຫ້ບັນດາກົມ ທີ່ໄດ້ເຊັນບົດບັນທຶກຊ່ວຍຈໍາ (MOU) ຮ່ວມກັບທະນາຄານກາງເກົາຫຼີ ໃນທ້າຍປີຜ່ານມາ ໃຫ້ເອົາໃຈໃສ່ຈັດຕັ້ງປະຕິບັດຕາມເນື້ອໃນ MOU ໃຫ້ເກີດຜົນເປັນຈິງ. ພ້ອມນັ້ນ, ກໍໃຫ້ລາຍງານມາຍັງຄະນະຜູ້ວ່າການ ທຫລ ຊາບຢ່າງເປັນປົກກະຕິ;

– ມອບໃຫ້ຄະນະປັບປຸງກົດໝາຍວ່າດ້ວຍທະນາຄານທຸລະກິດ ຕ້ອງມີຄວາມເປັນເອກະພາບໃນລວງດຽວກັນ ດ້ວຍຄວາມຮັບຜິດຊອບສູງ ແລະ ເອົາໃຈໃສ່ປັບປຸງທາງດ້ານເນື້ອໃນໃຫ້ໜັກແໜ້ນ ແລະ ຮັດກຸມ ຮັບປະກັນຂອດການຈັດຕັ້ງປະຕິບັດຕົວຈິງ ເພື່ອກະກຽມລາຍງານກໍ່ກອງປະຊຸມລັດຖະບານ ປະຈໍາເດືອນ ສິງຫາ 2018;

– ສືບຕໍ່ການປະເມີນມູນຄ່າໂຄງການ ATM Pool ໃຫ້ສໍາເລັດຕາມແຜນການ;

– ມອບໃຫ້ກົມເງິນຕາ ໄປສົມທົບກັບທ່ານ ອານຸລົມ ກ່ຽວກັບຮູບພາບທີ່ຈະກໍານົດໃສ່ທະນະບັດ ເນື່ອງຈາກເພິ່ນມີບົດຮຽນຫຼາຍ. ຫຼັງຈາກນັ້ນ, ຈຶ່ງລາຍງານມາຍັງຄະນະຜູ້ວ່າການ ທຫລ;

4. ວຽກງານຄຸ້ມຄອງ:

– ມອບໃຫ້ກົມຈັດຕັ້ງແລະພະນັກງານ ແລະ ຫ້ອງການ ທຫລ ເຊີນບັນດາກົມກ່ຽວຂ້ອງ ເປັນຕົ້ນ: ກົມຄຸ້ມຄອງທະນາຄານທຸລະກິດ, ກົມຄຸ້ມຄອງສະຖາບັນການເງິນ, ກົມເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ກົມຄຸ້ມຄອງລະບົບຊໍາສະສາງ ເພື່ອມາປຶກສາຫາລື ແລະ ແຍກຄວາມຮັບຜິດຊອບກັນຢ່າງຈະແຈ້ງ ໂດຍສະເພາະວຽກງານການຊໍາລະສະສາງ ເພື່ອໃຫ້ເປັນເອກະພາບ ແລະ ເຂົ້າ-ອອກປະຕູດຽວ;

– ມອບໃຫ້ກົມຄຸ້ມຄອງສະຖາບັນການເງິນ ລົງຕິດຕາມຢ່າງໃກ້ຊິດຕິດແທດ ເພື່ອແກ້ໄຂບັນຫາ ສະຖາບັນການເງິນທີ່ມີບັນຫາ 2 ແຫ່ງ. ພ້ອມດຽວກັນນັ້ນ, ກໍ່ໃຫ້ເອົາໃຈໃສ່ຄຸ້ມຄອງລົງເລິກ ຕໍ່ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ເນື່ອງຈາກສະຖາບັນການເງິນດັ່ງກ່າວແຕະຕ້ອງເຖິງເງິນຂອງສັງຄົມ. ພ້ອມທັງເກັບກໍາສະພາບຫົວໜ່ວຍທຸລະກິດທີ່ເຄື່ອນໄຫວບໍ່ຖືກຕ້ອງຕາມລະບຽບກົດໝາຍ ໃຫ້ທັນສະພາບການ.

5. ວຽກງານຕ້ານການຟອກເງິນ: ມອບໃຫ້ສໍານັກງານຂໍ້ມູນຕ້ານການຟອກເງິນ ສັງລວມບັນຫາທີ່ ສປປ ລາວ ມີພັນທະກັບສາກົນ ໃຫ້ຈະແຈ້ງ, ຍັງມີບັນຫາຢູ່ຂອດໃດ ແລະ ຄວນຈັດກອງປະຊຸມຂັ້ນໃດກໍ່ໃຫ້ລາຍງານຄະນະຜູ້ວ່າການ ທຫລ. ພ້ອມດຽວກັນນັ້ນ, ກໍ່ໃຫ້ກວດກາຄືນທັງໝົດການລາຍງານກ່ຽວກັບກຸ່ມບໍລິສັດດອກງິ້ວຄໍາ ເພື່ອແກ້ໄຂໃຫ້ຖືກຈຸດ ເປັນຂໍ້ມູນໃຫ້ທາງຄະນະລະດັບຊາດ ລາຍງານຕໍ່ລັດຖະບານ. ສໍາລັບບັນດາກົມ ແລະ ທະນາຄານທຸລະກິດ ທີ່ໄດ້ຮັບເອກະສານກ່ຽວກັບການສະເໜີຂໍນໍາທຶນເຂົ້າມາ ສປປ ລາວ ແມ່ນໃຫ້ສັງລວມສະພາບ ແລ້ວນໍາສົ່ງໃຫ້ຫ້ອງການ ເພື່ອແຈ້ງຕອບ;

6. ວຽກງານນິຕິກໍາ:

– ມອບໃຫ້ກົມຄຸ້ມຄອງລະບົບຊໍາລະສະສາງ ຜັນຂະຫຍາຍກົດໝາຍວ່າດ້ວຍລະບົບການຊໍາລະ (ສະບັບເລກທີ 32/ສພຊ, ລົງວັນທີ 7 ພະຈິກ 2017). ໂດຍການເປັນເຈົ້າການ ຖອດຖອນບົດຮຽນຈາກຕ່າງປະເທດ ເພື່ອຄົ້ນຄວ້າກ່ຽວກັບນິຕິກໍາລຸ່ມກົດໝາຍດັ່ງກ່າວ ຄວນຈະມີນິຕິກໍາໃດແດ່? ທາງກົມ ສາມາດເຮັດເອງໄດ້ ຫຼື ຕ້ອງມີຊ່ຽວຊານມາຊ່ວຍຄືແນວໃດ ໃຫ້ສັງລວມລາຍງານ ຂໍທິດຊີ້ນໍາຈາກຄະນະຜູ້ວ່າການ ທຫລ ເປັນອັນສະເພາະ;

– ໃຫ້ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ປະກອບຄໍາເຫັນຕໍ່ກັບຮ່າງກົດໝາຍວິສາຫະກິດ (ສະບັບປັບປຸງ) ທີ່ຕິດພັນກັບວຽກງານຂອງຕົນເທົ່ານັ້ນ (ການເອົາຮຸ້ນເຂົ້າຊື້-ຂາຍ ໃນຕະຫຼາດຫຼັກຊັບ);

7. ວຽກງານພົວພັນສາກົນ: ມອບໃຫ້ກົມພົວພັນສາກົນ ກະກຽມເນື້ອໃນເພື່ອແລກປ່ຽນໃນກອງປະຊຸມທະວິພາຄີ ກັບ 2 ທະນາຄານກາງ ໃນກອງປະຊຸມ 2 ຝ່າຍ ຄື: ① ກັບທະນາຄານແຫ່ງລັດຫວຽດນາມ ທີ່ຈະຈັດຂຶ້ນໃນທ້າຍເດືອນ 7/2018: ໃຫ້ມີບັນຫາໃໝ່ ໂດຍສະເພາະບັນຫາຈຳເປັນທີ່ທາງ ທຫລ ຕ້ອງການຖອດຖອນແລກປ່ຽນບົດຮຽນນຳ ແລະ ② ກັບທະນາຄານແຫ່ງປະເທດໄທ: ສັງລວມເນື້ອໃນການຮ່ວມມື ແລະ ໄລຍະຜ່ານມາມີຫຍັງແດ່ຕາມ MOU. ແລະ ບັນຫາ ທີ່ເບື້ອງ ທປທ ຢາກຈັດຕັ້ງປະຕິບັດ ໂດຍສະເພາະແມ່ນການຊຳລະສະສາງສະກຸນເງິນທ້ອງຖິ່ນ ວ່າເນື້ອແທ້ແລ້ວ ຍຸດທະສາດຂອງ ທປທ ຢາກໄດ້ຫຍັງແທ້;

8. ວຽກງານລະຫວ່າງ ທຫລ ແລະ KRX: ມອບໃຫ້ສະພາບໍລິຫານຕະຫຼາດຊັບລາວ ປຶກສາຫາລືເປັນເອກະພາບ ກັບ ຕະຫຼາດຫຼັກຊັບເກົາຫຼີ ໃນ 2 ບັນຫາຄື: ① ສຳລັບເງິນເດືອນ ຖ້າເຄື່ອນໄຫວມີປະສິດທິພາບ (ກຳໄລ) ແມ່ນສາມາດ ເພີ່ມເງິນເດືອນຂຶ້ນໃຫ້ພະນັກງານໄດ້, ຖ້າເຄື່ອນໄຫວບໍ່ມີປະສິດທິພາບ (ຂາດທຶນ) ແມ່ນບໍ່ສາມາດຂຶ້ນເງິນເດືອນໃຫ້ໄດ້. ການປະຕິບັດດັ່ງກ່າວ ຖ້າຂັດກັບເນື້ອໃນຂອງສັນຍາຮ່ວມທຶນຂອງ ທຫລ ແລະ KRX ກໍ່ອາດພິຈາລະນາຕັດປັບ ໂດຍໃຫ້ ປັບປຸງໃນສັນຍາ ຫຼື ຂໍ້ຕົກລົງ ເປັນມາດຕາສະເພາະ ແລະ ② ສ່ວນການປັບປຸງ IT ແມ່ນເຫັນດີໃຫ້ປັບປຸງ ເນື່ອງຈາກມີ ຄວາມສຳຄັນ ແລະ ເປັນມູນຄ່າບໍ່ສູງ;

9. ມອບໃຫ້ສະຖາບັນການທະນາຄານ ເອົາໃຈໃສ່ຕໍ່ຮັບນັກສຶກສາໃໝ່ໃຫ້ມີຄວາມປ່ອງໃສ ໂດຍເລັ່ງໃສ່ຄຸນນະ ພາບເປັນຫຼັກ;

ກອງປະຊຸມດັ່ງກ່າວໄດ້ປິດລົງຂອງວັນດຽວກັນໃນເວລາ 12:00 ໂມງ.

ປະທານກອງປະຊຸມ

ສົມພາວ ໄຟສິດ

ຜູ້ບັນທຶກ